**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ...໒໗໔໑.../ກປ

ນະຄອນຫຼວງວຽງຈັນ, ວັນທີ...໒໒...ພຶດສະພາ 2017

# ຄຳສັ່ງ

## ກ່ຽວກັບການຄຸ້ມຄອງ ການລ້ຽງໝູ, ການສະໜອງຊີ້ນ ແລະ ຜະລິດຕະພັນໝູ ຢູ່ ສປປ ລາວ

ເຖິງ:
- ບັນດາທ່ານກຳມະການ ໃນຄະນະປະສານງານຂັ້ນສູນກາງ ເພື່ອປະຕິບັດ ໂຄງການ ສົ່ງເສີມຜະລິດເປັນສິນຄ້າ ແລະ ຄ້ຳປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ ແຫ່ງຊາດ ຕາມຂໍ້ຕົກລົງ ສະບັບເລກທີ 04/ນຍ, ລົງວັນທີ 05 ມັງກອນ 2017.
- ຫົວໜ້າ ແລະ ຄະນະກອງເລຂາຄະນະປະສານງານ ເພື່ອປະຕິບັດໂຄງການ ສົ່ງເສີມຜະລິດເປັນສິນຄ້າ ແລະ ຄ້ຳປະກັນຄວາມໝັ້ນຄົງດ້ານສະບຽງອາຫານ ຂັ້ນສູນກາງ ແລະ ແຂວງ, ນະຄອນຫຼວງວຽງຈັນ.
- ທ່ານ ຫົວໜ້າກົມລ້ຽງສັດ ແລະການປະມົງ ໃນນາມຜູ້ປະຈຳການ ກອງເລຂາ ຢູ່ສູນກາງ;
- ທ່ານ ຫົວໜ້າພະແນກກະສິກຳ ແລະປ່າໄມ້ ປະຈຳແຂວງ ແລະນະຄອນຫຼວງວຽງຈັນໃນນາມຜູ້ປະຈຳການ ກອງເລຂາ ປະຈຳການຢູ່ແຂວງ ແລະ ນະຄອນຫຼວງວຽງຈັນ.

- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດແລະການສັດຕະວະແພດ ສະບັບປັບປຸງເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວຂອງກະຊວງກະສິກຳແລະປ່າໄມ້;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 158/ຫສນຍ.ກສສ, ລົງວັນທີ 31 ມັງກອນ 2017.

ພັກ ແລະ ລັດຖະບານ ຍາມໃດ ກໍໃຫ້ບູລິມະສິດຕໍ່ການຜະລິດດ້ານກະສິກຳ ເປັນຕົ້ນແມ່ນ ການຜະລິດດ້ານສະບຽງອາຫານ ຮັບໃຊ້ພາຍໃນໃຫ້ຄ້ຳປະກັນຄວາມໝັ້ນຄົງ ທາງດ້ານສະບຽງອາຫານ ແລະ ສົ່ງເສີມ ການຜະລິດສະບຽງເປັນສິນຄ້າ ເພື່ອສົ່ງອອກ ຕ່າງປະເທດ ບົນພື້ນຖານພັດທະນາ ໄປຕາມທິດສີຂຽວ ເຮັດກະສິກຳສະອາດ ແລະ ທັນສະໄໝ ນຳໃຊ້ທ່າແຮງບົ່ມຊ້ອນພາຍໃນ ສົມທົບຄວາມກ້າວໜ້າ ດ້ານວິທະຍາສາດ ເຕັກນິກ ແລະ ເຕັກໂນໂລຊີ ແລະ ທີ່ຍືນຍົງ, ເປັນມິດຕໍ່ສິ່ງແວດລ້ອມ. ມາຮອດປັດຈຸບັນ, ພວກເຮົາສາມາດຮັບປະກັນໂດຍພື້ນຖານ ກ່ຽວກັບການຕອບສະໜອງສະບຽງອາຫານ ເຂົ້າ, ພືດສະບຽງ, ສັດ ແລະ ປາ. ໃນນີ້ ເວົ້າສະເພາະ ການສົ່ງເສີມ ການລ້ຽງໝູ, ພວກເຮົາສາມາດພັດທະນາ ຢ່າງແຂງແຮງສົມຄວນ ໂດຍສະເພາະ ໃນໄລຍະ 10 ປີຜ່ານມາ ຊຶ່ງມາຮອດປະຈຸບັນນີ້ ຄຽງຄູ່ກັບ ການປັບປຸງການລ້ຽງໝູແບບທຳມະຊາດ ຢູ່ຊົນນະບົດ ໄປສູ່

ຜະລິດຕະພາບສູງກວ່າເກົ່າ, ພວກເຮົາ ໄດ້ພັດທະນາລະບົບການລ້ຽງໝູເປັນຟາມທັນສະໄໝ ຢູ່ຕົວເມືອງໃຫຍ່ ຢ່າງກ້າວກະໂດດສົມຄວນ ຊຶ່ງປະຈຸບັນນີ້ ໄດ້ມີອັດຕາສ່ວນ ເຖິງ 30% ຂອງການຜະລິດທັງໝົດໃນ ທົ່ວປະເທດ, ກວມເຖິງປະມານ 24.000 ແມ່ ໃນເກືອບ 700 ຟາມໃນລະດັບທົ່ວປະເທດ ໂດຍສາມາດສະໜອງລູກໝູແນວພັນດີ ລ້ຽງເປັນໝູຊີ້ນປະມານ 400.000 ໂຕຕໍ່ປີ ແລະ ສະໜອງຊີ້ນເຖິງ 27.000 ໂຕນຕໍ່ປີ, ສາມາດສະຕອບສະໜອງຄວາມຕ້ອງການພາຍໃນ ໂດຍສະເພາະຕົວເມືອງໃຫຍ່ ເປັນຕົ້ນແມ່ນ ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ຫຼວງພະບາງ, ຄຳມ່ວນ, ສະຫວັນນະເຂດ ແລະ ແຂວງຈຳປາສັກ.

ແຕ່ພ້ອມດຽວກັນນັ້ນ ຍ້ອນການຜະລິດພາຍໃນ ຍັງບໍ່ທັນແຂງແຮງ ແລະ ໝັ້ນຄົງ, ຍັງບໍ່ທັນຜະລິດເປັນລະບົບຕ່ອງໂສ້ ທີ່ຮັບປະກັນຕົ້ນທຶນຕ່ຳ, ຍ້ອນການຄຸ້ມຄອງ ກ່ຽວກັບການດຸ່ນດ່ຽງ ຄວາມຕ້ອງການ ແລະ ການສະໜອງ ກໍຄືການຮັບປະກັນການປະຕິບັດ ນິຕິກຳ ແລະ ສະບຽບການ ການລ້ຽງສັດ ແລະ ສັດຕະວະແພດຂອງພາກສ່ວນຂະແໜງການລັດ ກ່ຽວຂ້ອງ ນັບທັງຢູ່ສູນກາງ ແລະ ທ້ອງຖິ່ນ ບໍ່ທັນເຂັ້ມງວດ, ເຂັ້ມແຂງ ແລະ ມີປະສິດທິຜົນເທົ່າທີ່ຄວນ ແລະ ຍ້ອນສະພາບການເຊື່ອມໂຍງດ້ານເສດຖະກິດ ຢູ່ໃນຂົງເຂດ ແລະ ຢູ່ໃນໂລກມີການເປີດກວ້າງ ຢ່າງສູງຊຶ່ງນຳມາທັງ ກະລະໂອກາດ ແລະ ສິ່ງທ້າທາຍຫຼາຍຢ່າງ, ການຜະລິດ ແລະ ສະໜອງໝູ ຢູ່ພາຍໃນ ປະເທດ ຍັງບໍ່ສາມາດຮັບປະກັນດ້ານປະລິມານ ແລະ ໂດຍສະເພາະດ້ານຄຸນນະພາບ. ນອກຈາກນັ້ນ, ລະບົບຂອງກຸ່ມຜະລິດໝູ, ກຸ່ມປຸງແຕ່ງ ແລະ ຈຳໜ່າຍຜະລິດຕະພັນໝູ ກໍຄື ສະມາຄົມການລ້ຽງໝູ ແລະ ຄ້າໝູ ແລະ ຜະລິດຕະພັນໝູ ຍັງບໍ່ໄດ້ເຄື່ອນໄຫວເທົ່າທີ່ຄວນ ແລະ ກໍບໍ່ໄດ້ຮັບການສົ່ງເສີມ, ຊ່ວຍເຫຼືອ ແລະ ສະໜັບສະໜູນ ຢ່າງເປັນລະບົບຈາກພາກລັດ. ຍ້ອນເຫດນີ້ ຍັງມີຄວາມຕ້ອງການນຳເຂົ້າ ກ່ຽວກັບພໍ່ແມ່ພັນໝູມາດຕະ ຖານສາກົນ, ການນຳເຂົ້າລູກໝູແນວພັນດີ, ການນຳເຂົ້າອາຫານໝູ ແລະ ຢາທາດບຳລຸງອັນຈຳເປັນ ແລະ ການນຳເຂົ້າ ຜະລິດຕະພັນຈາກໝູ ຊຶ່ງຖ້າການນຳເຂົ້າ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການວາງໄວ້ ຈະບໍ່ມີການກະທົບຕໍ່ການຜະລິດ ຢູ່ພາຍໃນ. ແຕ່ພ້ອມດຽວກັນ ຍ້ອນການຕິດຕາມ ກວດກາ ຈາກພາກລັດ ແລະ ກຸ່ມຜະລິດ ກໍຄື ສະມາຄົມ ຍັງບໍ່ທັນເຂັ້ມແຂງ ຈຶ່ງເກີດມີການລັກລອບນຳເຂົ້າ ໝູເປັນ ແລະ ຜະລິດຕະພັນໝູ ຢ່າງບໍ່ຖືກຕ້ອງ ແລະ ຢ່າງຫຼວງຫຼາຍ ຈາກພາຍນອກ ເປັນຕົ້ນແມ່ນ ຜ່ານດ່ານທາງການ ໂດຍບໍ່ໄດ້ຮັບການອະນຸຍາດ ແລະ ຜ່ານດ່ານທ້ອງຖິ່ນ ແລະ ດ່ານປະເພນີ. ໜັກໄປກວ່ານີ້ ແມ່ນມີປະກົດການນຳຊີ້ນໝູ ແລະ ຜະລິດຕະພາບໝູ ຄຸນນະພາບຕ່ຳ ແລະລາຄາຖືກ ມາຈາກປະເທດໄກທີ່ບໍ່ບໍລິໂພກໝູ ເຮັດໃຫ້ເກີດມີ ພະຍາດແຜ່ລາມຢູ່ພາຍໃນ.

ດັ່ງນັ້ນ, ເພື່ອແກ້ໄຂບັນຫາດັ່ງກ່າວ ຢ່າງຂາດຕົວໃນໄລຍະຍາວນານ ແລະ ໃຫ້ສະຫງົບປົກກະຕິ, ສາມາດຍູ້ຂະບວນການລ້ຽງໝູພາຍໃນຂອງລາວເຮົາ ໃຫ້ຂະຫຍາຍຕົວຢ່າງແຂງແຮງ ແລະ ມີຄວາມສາມາດແຂ່ງໃນລະດັບສູງ, ຮັບປະກັນຄວາມຍືນຍົງ ພ້ອມດຽວກັນກໍເພື່ອປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດສັດຈາກພາຍນອກເຂົ້າມາ ສປປ ລາວ ນັ້ນ,

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:**

1. ໃຫ້ກອງເລຂາຂອງຄະນະປະສານງານຂັ້ນສູນກາງ ເພື່ອປະຕິບັດໂຄງການ ສົ່ງເສີມການຜະລິດເປັນສິນຄ້າ ແລະ ໂຄງການຄ້ຳປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ ຂັ້ນສູນກາງ ຍົກສູງຄວາມຮັບຜິດຊອບຂອງຕົນ ໃນການກຳນົດ, ຕິກລົງ ແລະ ຊຸກຍູ້ການປະຕິບັດແຜນດຸ່ນດ່ຽງຄວາມຕ້ອງການ ໃນການສະໜອງໝູ ແລະ ຜະລິດຕະພັນໝູ ຢ່າງເປັນລະບົບຕໍ່ເນື່ອງ ແລະລົງເລິກແຍກ ເປັນແຕ່ລະແຂວງ ໂດຍເນັ້ນໜັກໃສ່ແຂວງ ແລະ ຕົວເມືອງໃຫຍ່. ພ້ອມນີ້ ຕ້ອງໄດ້ຄົ້ນຄວ້າກ່ຽວກັບຕົ້ນທຶນການຜະລິດ, ຊອກຫາສາເຫດ